ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ພະແນກໂຍທາທິການ ແລະ ຂົນສົ່ງແຂວງສາລະວັນ

ເລກທີ.3957...../ຍທຂ.ສວ

ສາລະວັນ, ວັນທີ.6.4.2026.

# ໜັງສືແຈ້ງການປະມູນ

**ເຖິງ :** ລັດວິສາຫະກິດ ແລະ ບັນດາບໍລິສັດກໍ່ສ້າງຂົວ-ທາງ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເຊີນເຂົ້າຮ່ວມແຂ່ງຂັນປະມູນແບບເປີດກວ້າງພາຍໃນໂຄງການສ້ອມແປງທາງຫຼວງແຫ່ງຊາດວຽກບຸລະນະຮັກສາ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງເລກ 13ໃຕ້, ເສັ້ນທາງເລກ 20+1H ແລະ ເສັ້ນທາງເລກ 15 ຂອບເຂດແຂວງສາລະວັນ (ນໍາໃຊ້ບ້ວງເງິນກອງທຶນທາງປີ 2026).

- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງສາລະວັນ ສະບັບເລກທີ 678/ຈຂ.ສວ, ລົງວັນທີ 25 ເມສາ 2025 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ.
- ອີງຕາມ ໜັງສືທາງລັດຖະການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 821/ຍທຂ, ລົງວັນທີ 20 ຕຸລາ 2025 ແຈ້ງແຜນງົບປະມານກອງທຶນທາງ ປະຈໍາປີ 2026.

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງສາລະວັນ, ຂໍປະກາດແຈ້ງການເຖິງ ລັດວິສາຫະກິດ ແລະ ບັນດາບໍລິສັດກໍ່ສ້າງຂົວທາງ ໃນຂອບເຂດທົ່ວປະເທດ ທີ່ມີຄວາມສົນໃຈເຂົ້າຮ່ວມແຂ່ງຂັນປະມູນແບບເປີດກວ້າງພາຍໃນວຽກບຸລະນະຮັກສາ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດປະຈໍາປີ 2026 ຈໍານວນ 05 ສັນຍາຄື:

ກ. **ວຽກບຸລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດທາງເລກ: 13 ໃຕ້,** ຕອນທາງແຕ່ ຂົວເຊບັ້ງນວນ ຊ.ດ ແຂວງສະຫວັນນະເຂດ, ເມືອງລະຄອນເພັງ ຫາ ບ້ານນາດ່ານ ຊ.ດ ແຂວງຈໍາປາສັກ, ເມືອງຄົງເຊໂດນ ກມ 541+000 - ກມ 623+000 ໄລຍະທາງ 82 ກິໂລແມັດ.

ຂ. **ວຽກບຸລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດທາງເລກ: 15,** ຕອນທາງແຕ່ ສາມແຍກ ບ້ານນາປົ່ງ, ເມືອງຄົງເຊໂດນ ຫາ ບ້ານຫາດ(ຂົວເຊໂດນ), ເມືອງວາປີ ກມ 0+000 - ກມ 25+000 ໄລຍະທາງ 25 ກິໂລແມັດ.

ຄ. **ວຽກບຸລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດທາງເລກ: 15,** ຕອນທາງແຕ່ ບ້ານຫາດ(ຂົວເຊໂດນ), ເມືອງວາປີ ຫາ ແຍກທາງວົງວຽນ ບ້ານນາໂດນ, ເມືອງສາລະວັນ ກມ 25+000 - ກມ 73+000 ໄລຍະທາງ 48 ກິໂລແມັດ.

ງ. **ວຽກບຸລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກ: 15** ຕອນທາງແຕ່ ແຍກທາງວົງວຽນ ບ້ານນາໂດນ, ເມືອງສາລະວັນ ຫາ ແຍກທາງກະລຶມ ບ້ານໃບງນໍ້າ, ເມືອງຕະໂອ້ຍ ກມ 73+000 - ກມ 135 +000 ໄລຍະທາງ 62 ກິໂລແມັດ.

ຈ. **ວຽກບຸລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດທາງເລກ: 20** ຕອນທາງແຕ່ ບ້ານຫວ້ຍຫູນ ຊ.ດ ແຂວງຈໍາປາສັກ ຫາ ບ້ານວັດກາງ, ເມືອງສາລະວັນ, ກມ 39+000 - ກມ 95 +000 ໄລຍະທາງ 56 ກິໂລແມັດ ແລະ ເສັ້ນທາງເລກ1H ຕອນທາງແຕ່ ບ້ານແບ່ງອຸດົມ, ເມືອງສາລະວັນ ຫາ ບ້ານກົກພຸງ

สแกนด้วย CamScanner

ໃຕ້ ຊ.ດ ແຂວງເຊກອງ/ເຊກອງ, ກມ 0+000 - ກມ 10 +000 ໄລຍະທາງ 10 ກິໄລແມັດ ( ນຳໃຊ້ບ້ວງເງິນກອງທຶນທາງປີ 2026 ) ໄລຍະສັນຍາການສ້ອມແປງ 1 ປີ, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ແຫຼ່ງທຶນ : ງົບປະມານນຳໃຊ້ບ້ວງເງິນກອງທຶນທາງປີ 2026.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ແມ່ນໃຫ້ທຸກໆບໍລິສັດທີ່ສະເໜີຍື່ນຊອງປະມູນ ຕ້ອງແຈ້ງທຶນຕົນເອງຢ່າງໜ້ອຍ 30% ຂອງມູນຄ່າສະເໜີ ແລະ ມີໃບອະນຸຍາດດຳເນີນທຸລະກິດ ທີ່ຖືກຕ້ອງຕາມກົດໝາຍ ໂດຍກ່ຽວພັນກັບວຽກທີ່ຈະດຳເນີນການກໍ່ສ້າງ (ປະຕິງຊັ້ນ 1,2,3) ຢູ່ໃນຂອບເຂດທົ່ວປະເທດ.
4. ບໍລິສັດໃດທີ່ມີຄວາມສົນໃຈສາມາດຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງສາລະວັນ (ຂະແໜງຂົວທາງ) ນັບແຕ່ວັນທີ 08 ເມສາ 2026 ເປັນຕົ້ນໄປ, ໃນລາຄາ 1,000,000 ກີບ/1 ຊອງປະມູນ (ຫນຶ່ງລ້ານກີບຕໍ່ໜຶ່ງຊອງປະມູນ) ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
5. ເອກະສານປະມູນມີອາຍຸ 90 ວັນຫຼັງການເປີດຊອງປະມູນ, ຕ້ອງມີເງິນຄ້ຳປະກັນການປະມູນຢັ້ງຢືນຈາກທະນາຄານ ໃນມູນຄ່າ 2% ຂອງມູນຄ່າທີ່ສະເໜີປະມູນ, ໂດຍມີອາຍຸ 118 ວັນ ( 90+28 ວັນ ) ຕາມຈຳນວນທີ່ລະບຸໄວ້ໃນເອກະສານຢ່າງຄົບຖ້ວນ.
6. ການລົງກວດກາສະໜາມຈະຖືກຈັດຂຶ້ນໂດຍພະແນກໂຍທາທິການ ແລະ ຂົນສົ່ງ ແຂວງສາລະວັນ ໃນວັນທີ 29 - 30 ເມສາ 2026 (ແຜນການລະອຽດໃຫ້ຕິດຕໍ່ພະແນກ ໂຍທາທິການ ແລະຂົນສົ່ງ, ຂະແໜງຂົວທາງ) ບໍລິສັດທີ່ຈະເຂົ້າຮ່ວມປະມູນໂຄງການຈຳເປັນຕ້ອງເຂົ້າຮ່ວມການກວດກາສະໜາມ ເພື່ອຮັບຮູ້ສະພາບ, ເງື່ອນໄຂ ແລະ ຄວາມຕ້ອງການຂອງວຽກຢູ່ພາກສະໜາມ.
7. ກອງປະຊຸມກະກຽມກ່ອນການເປີດຊອງປະມູນ ຈະໄດ້ຈັດຂຶ້ນ ໃນເວລາ 09:00 ໂມງເຊົ້າຂອງວັນທີ 21 ກໍລະກົດ 2026 ທີ່ຫ້ອງປະຊຸມພະແນກ ຍທຂ ປະຈຳແຂວງສາລະວັນ.
8. ຊອງປະມູນພ້ອມເອກະສານຢັ້ງຢືນອື່ນໆ (QualificationInformation) ຕ້ອງສົ່ງເຖິງພະແນກ ຍທຂ ປະຈຳ ແຂວງສາລະວັນ (ຄະນະກຳມະການປະມູນ) ກ່ອນເປີດຊອງປະມູນໃນເວລາ 09:00 ໂມງເຊົ້າຂອງວັນທີ 23 ກໍລະກົດ 2026, ທຸກຊອງປະມູນຈະຖືກເປີດຊ່ອງໜ້າຄະນະກຳມະການປະມູນ ແລະ ບັນດາບໍລິສັດທີ່ເຂົ້າຮ່ວມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງລັດວິສາຫະກິດ ແລະ ບັນດາບໍລິສັດກໍ່ສ້າງຂົວ-ທາງ ໃນຂອບເຂດທົ່ວປະເທດເພື່ອຮັບຊາບ ໃນການປະມູນໂຄງການດັ່ງກ່າວ ຕາມເນື້ອໃນ ແລະ ເງື່ອນໄຂ ດັ່ງຂ້າງເທິງນີ້ດ້ວຍ.

ຫົວໜ້າ ພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສາລະວັນ

ພູນອນ ໄກຍະລາດ

สแกนด้วย CamScanner